## -ຂໍປະກາດວ່າ ຫລາຍປີທີ່ຜ່ານມາ-

ພວກເຮົາ ລາວຊ້າຍ ລາວຂວາ-ຫຼື-ເອີ້ນກັນວ່າຂບວນການລາວອິສຣະແລະຂບວນການລາວແດງຢາກຣວ່ມເຂົ້າກັນເປັນລາວນຶ່ງລາວດຽວກັນນັ້ນ ແຕ່ມີເຫດ ການຫລາຍຢ່າງມາຂັດຂວາງ ໃນຄວາມຕັ້ງໃຈຂອງພວກເຮົາຈຶ່ງບໍ່ສຳເຣັດແຕ່ ເວລານີ້ພວກເຮົາໄດ້ມີໂອກາດອັນເໝາະສົມມາເຖິງແລ້ວ ນັບຕັ້ງແຕ່ມື້ນີ້ຕໍ່ໄປ ຄຳວ່າລາວແດງລາວຂາວບໍ່ຢາກໃຫ້ມີອີກແລ້ວ ພວກເຮົາຕ້ອງມາໂຮມເຂົ້າກັນໃຫ້ເປັນລາວອັນນຶ່ງໃຈດຽວກັນແລະໃຫ້ມາເປັນຊາດລາວອັນດຽວເໝືອນດັ່ງທີ່ເຄີຍ   ເປັນມາແຕ່ກ່ອນ ຫຼືໃນອະດີດ-ທາງພັກປະຊາຊົນລາວອິສຣະພວກເຮົາຫວັງວ່າພີ່ນ້ອງຊາວລາວທັງຫລາຍຈະຕ້ອນຮັບດ້ວຍຄວາມປິຕິຍິນດີໃນການປະຕິບັດມີດັ່ງນີ້

ກ. ໃນການໂຮມລາວຕ້ອງເປັນການສ້າງປະໂຍດໃຫ້ແກ່ປະຊາຊົນລາວແລະບໍ່ໃຫ້ມີຄວາມຄຽດແຄ້ນ ອາຄາດບາດໝາງຊຶ່ງກັນແລະກັນຄືຄວາມເກົ່າບໍ່ເດົ່າກັນມາ

ຂ. ຄວາມສຳເຣັດຂອງປະຊາຊົນລາວຈະມີຂຶ້ນໄດ້ກໍ່ຕໍ່ເມື່ອຜູ້ແທນຫຼືຜູ້ມີອຳນາດຂອງຊາດ ຕ້ອງປຣັບແປງແລະລົງມະຕິໃຫ້ເປັນເອກສັນກັນທັງສອງຝ່າຍ

ຄ. ທາງສະມາຊິກພ້ອມຄະນະແລະປະຊາຊົນໃນທຸກຊົນຊັ້ນຊົນເຜົ່າແຕ່ເໜືອຕຮອດໄຕ້ຂອງລາວຕ້ອງພາກັນພິຈາຣະນາເຫັດການຕ່າງໆ ເຊັ່ນ ທາງການເມືອງການເສຖກິດ,ການວັທນະທັມ ແລະຟື້ນຟູຊາດໃຫ້ກວ້າງຂວາງອອກໄປ

ງ. ໃຫ້ທຸກທະວີບອາຊີໄດ້ຮັບຮູ້ພຣະຣາຊອານາຈັກລາວ ທີ່ສ້າງຄວາມຈະເຣີນກ້າວໜ້າ ທຽມບ່າທຽມໄລ່ເພື່ອນບ້ານ ຮວ່ມທະວີບ

1-ພຣະຣາຊອານາຈັກລາວຈະຮັກສາປ້ອງກັນຊີວິດແລະຊັບສິນຂອງປະເທດໃນທຸກດ້ານທີ່ເຄົາລົບນັບຖືຢູ່ໃນຄວາມຄຸ້ມຄອງ ຂອງກົດໝາຍແຫ່ງຊາດລາວ

2. ພຣະຣາຊອານາຈັກລາວຈະຢູ່ໄດ້ກໍ່ດ້ວຍການເຊີດຊູທັງຄະນະສະມາຊິກແລະປະຊາຊົນລາວທີ່ປະກອບດ້ວຍບຸກຄົນ ທີ່ມີຄຸນວຸດທິແລະມີຄວາມສາມາດຊຶ່ງເຄີຍເປັນ ຂ້າຣາຊການມາກ່ອນ

3. ຣັຖບານລາວ ຊຶ່ງໃນຕໍ່ໜ້ານີ້ຕ້ອງໄດ້ຖືກດັດແປງແລະແກ້ໄຂໃຫ້ເປັນທັມໃນການປົກຄອງຣະບອບປະຊາທິປະໄຕແລ້ວໃຫ້ເຂົ້າມາປະສົມກັນທັງສອງຝ່າຍຄື-ຝ່າຍຂບວນການລາວແດງ-ແລະຝ່າຍຂບວນການລາວອິສຣະເກົ່າສວ່ນປະຊາຊົນລາວທັງເບີດໃນທຸກໆແຂວງກໍ່ມີຄວາມປາຖນາ

ຢ່າງແຮງກ້ວ່າຢາກເຫັນພຣະຣາຊອານາຈັກລາວ ເປັນເອກພາບແລະ ພອ້ມທີ່ຈະສນັບ
ສນູນໃນການຫອັນ ໂຮມລາວໃຫ້ເປັນປືກແຜ່ນຄື້ນໃໝ່ ຜໍໄດ້ຊາບຂ່າວກັນວ່າສະມາຊິກ
ຂບວນການລາວອິສຣະເກົ່າຂອງພວກເຮົາແລະຂບວນການລາວແດງຕອ້ງເຂົ້າຫອັນ
ໂຮມມາເປັນນໍ້ານຶ່ງໃຈດວຽກັນແລ້ວເຣີ້ມປະກາດວ່າຄວາມເປັນເອກຣາຊຂອງລາວ
ນັບແຕ່ມື້ນີ້ຕໍ່ໄປ -ການປົກຄອງຕ່າງໆຂອງລາວຕອ້ງຂື້ນກັບລາວເໝືອນເດີມ ທາງຄນະ
ທັງສອງຝ່າຽ -ໄດ້ກ່າວວ່າ ອໍານາດ ການປົກຄອງຣະບອບຄອມມຸນິສແຂວເໜືອທີ່ຢູ່ໃນ
ປະເທດລາວນັ້ນຕອ້ງໃຫ້ສູນຊື້ນໄປພອ້ມກັບການຍຶດຄອງຂອງວຽດນາມເໜືອເພາະ
ສະນັ້ນຄົນລາວພວກເຮົາ ນັບແຕ່ນີ້ຕໍ່ໄປລາວຈະຕອ້ງປົກຄອງຕົນເອງໃນຖານະຂອງປະ
ເທດທີ່ເປັນເອກຣາຊແລະປະຊາທິປະໄຕປະຊາຊົນລາວຂໍປະກາດວ່າໃຫ້ວຽດນາມເໜືອ
ກັບຄືນສູ່ປະເທດຂອງຕົນຫຼືຖ້າຢາກຢູ່ໃນປະເທດລາວຕໍ່ໄປ ກໍ່ໃຫ້ຢູ່ໃນຖານະເປັນພົລເມືອງ
ລາວແລະຕອ້ງຢູ່ໄຕ້ກົດໝາຽຂອງປະເທດຫຼືຢູ່ແບບຊາວຕ່າງດ້າວ -ໃນຄນະນີ້ທີ່ການປົກ
ຄອງປະເທດຍັງຕົກຢູ່ໃນຄວາມສັບສົນ -ເນື່ອງມາຈາກພັຄຄອມມຸນິສວຽດນາມທີ່ມາຫາ
ກິນຢູ່ໃນວຽງຈັນແລະຢູ່ຫົວເມືອງຕ່າງໆໃນປະຈຸບັນມີປະມານ -ຫ້າແສນກົ່ວຄົນ -ພາຽ
ໄຕ້ການນໍາ ພາຂອງວຽດນາມເໜືອຄອມມຸນິສ -ສ່ວນປະຊາຊົນລາວໃນທົ່ວປະເທດ
ຕັ້ງແຕ່ເໜືອຕຣອດໄຕ້ -ຂໍຫ້າມພວກວຽດນາມພັຄຄອມມຸມນິສ ບໍ່ໃຫ້ນໍາເອົາທຸງສີແດງ
ດາວເຫລືອງແລະຮູບ ໂຮ່ຈິມິນມາປະກາດຍຶດອໍານາດເອົາປະເທດລາວແລະບໍ່ໃຫ້ ໂຈມ
ຕີ -ເຈົ້າໜ້າທີ່ -ຂບວນການລາວອິສຣະເກົ່າຂອງພວກເຮົາແລະຫ້າມກົດຂີ່ຂົ່ມເຫັງ
ຄົນລາວອີກຣຸ້ຽແຮງໄປຍິ່ງກວ່ານັ້ນແລະບໍ່ໃຫ້ພວກວຽດນາມເໜືອພັຄຄອມມຸນິສ
ໄດ້ຄັດຄ້ານ ການເດີນຂບວນຂອງປະຊາຊົນລາວແລະໃນການໄປມາຫາສູ່ຂອງ
ປະຊາຊົນ ຕາມແຂວງແລະທອ້ງຖິ່ນຕ່າງໆ -ປະຊາຊົນລາວຂໍປະກາດອີກວ່າເມືອງ
ລາວຕອ້ງເປັນຂອງຄົນລາວ -ບໍ່ເປັນຂອງປະເທດອື່ນ -ຄໍາປະກາດດັ່ງກ່າວນີ້ ຂໍ
ໃຫ້ ໂລກມະຫາອໍານາດໄດ້ຮັບຮູ້ແລະປະເທດທີ່ປົກຄອງດວ້ຽຣະບອບປະທິປະໄຕ

<u>ພອ້ມນີ້ -ທາງພັກປະຊາຊົນລາວອິສຣະ</u>

ຂໍປະກາດເຖິງຊາວໜຸ່ມ -ພອ້ມນັກຮຽນນັກສຶກສາ -ຄູອາຈານພອ້ມພໍ່ແມ່ປະຊາຊົນ
ຄົນລາວເຮົາໃນທຸກຊົນຊາດຊົນເຜົ່າແຕ່ເໜືອຕຣອດໄຕ້ຂອງລາວ -ໃຫ້ດຸດັ່ງທັ່ງເທ
ເຂົ້າປະຖະກັບວຽດນາມເໜືອຄອມມຸນິສ -ເພື່ອປອ້ງກັນປະເທດຊາດຂອງພວກເຮົາ
ໃນ -ຄວາມຊົ່ວຮ້າຽຕໍ່ການກະທໍາຂອງວຽດນາມໄດ້ຣະບາດໄປທົ່ວ
ຫົວເມືອງຕ່າງໆ

ຂອງລາວ ແລະທັງເຮືອນຊານບ້ານຊ່ອງ ພ້ອມຊັບສິນຂອງປະຊາຊົນ ປະຊາຊົນ
ເຫັນເປັນເຊັ່ນນັ້ນແລ້ວໄດ້ພ້ອມພຽງກັນທັງຄນະຮ່ວມການປະຕິວັດກັບຂບວນລາວ
ແດງແລະຂບວນການລາວອິສຣະເກົ່າຂໍໃຫ້ເຂົ້າມາເປັນນໍ້ານຶ່ງໃຈດຽວກັນແລ້ວປະ
ກາດກ້ອງຢ່າງເປັນທາງການໄປທົ່ວໂລກໄດ້ຊາບວ່າສັນຍາແລະຂໍ້ຜູກພັນຕ່າງໆ
ທີ່ມີມາໃນຣະວ່າງ ວຽດນາມເໜືອກັບລາວຄອມມຸນິສນັ້ນ -ໃຫ້ຖືວ່າໝົດຄຸນຄ່າແລະ
ເປັນໂມຄະໄປໝົດແລ້ວນັບແຕ່ນີ້ຕໍ່ໄປລາວຈະຕ້ອງປົກຄອງຕົນເອງ ດ້ວຽຣະບອບປະ
ຊາທິປະໄຕແລະໃຫ້ມີສິດທິມະນຸດ ຢ່າງເປັນທັມ
-ສ່ວນພຣະຣາຊອານາຈັກລາວຕ້ອງເປັນຜືນແຜ່ນດຽວແລະຈະບໍ່ໃຫ້ຜູ້ໃດມາແບ່ງ
ແຍກໄດ້ -ອັນນີ້ແມ່ນປະຊາຊົນລາວຂໍປະກາດໃຫ້ໂລກຮັບຮູ້ທັງ -5 -ມະຫາ ອຳນາດ
ພ້ອມທັງໃຫ້ຮັບຮູ້ເຄື່ອງໝາຽຂອງປະເທດລາວນັ້ນ -ຄື -ທຸງຊ້າງສາມຫົວຢູ່ໃນໃຈກາງ
ແຜສີແດງ ແຫ່ງຄວາມເປັນເອກຣາຊຂອງລາວ -ຕ້ອງຖືກອັນເຊີນຂຶ້ນສູ່ຍອດເສົາ
ປິວສະບັດພາຽໃຕ້ທ້ອງຟ້າສີຄາມແລ້ວມີສຽງໄຊ ໂຍ ໂຮ່ຮ້ອງດ້ວຽຄວາມເບີກບານ
ຊົມຊື່ນຂອງຊາວລາວໃນທຸກຊົນຊາດຊົນເຜົ່າ
.ພວກເຮົາຂໍປະກາດເຖິງພີ່ນ້ອງຊາວລາວທຸກຊົນຊາດຊົນເຜົ່າໃນທົ່ວພຣະຣາຊ
ອານາຈັກແລະຢູ່ຕ່າງປະເທດທົ່ວມູມໂລກໄດ້ຊາບວ່າຊາວສາມສິບກົ່ວປີຜ່ານມາ
ແລ້ວປະເທດລາວຍັງຢູ່ໃຕ້ອຳນາດພັຄຄອມມຸນິສວຽດນາມບໍ່ມີວັນເຫືອດຫາຽ
ມາບັດນີ້ປະຊາຊົນລາວພ້ອມທັງຄນະແລະສະມາຊິກທັງສອງຝ່າຽໄດ້ທ້ອນໂຮມ
ເຮື່ອແຮງແລະຈິດໃຈເພື່ອປະເທດຊາດບ້ານເມືອງແລ້ວໄດ້ພ້ອມກັນຮ່ວມໄມ້ ຮ່ວມ
ມືຂອງຊາວລາວທັງປະເທດເພື່ອຊ່ວຽກັນສ້າງສາມະຄີແລະຂັບໄລ່ຊາວ
ຕ່າງຊາດທີ່ເປັນພັຄຄອມມຸນິສອອກຈາກຜືນແຜ່ນດິນຂອງລາວ
-ອັນນີ້ພວກເຮົາຮູ້ສຶກຍິນດີທີ່ໄດ້ເຂົ້າຮ່ວມກັນທັງສອງຝ່າຽເພື່ອຮັບໃຊ້ປະເທດ
ຊາດຢ່າງເຕັມໄມ້ເຕັມມືແລະໄດ້ຮ່ວມໄມ້ຮ່ວມມືກັບປະຊາຊົນລາວທຸກຖ້ວນ
ໜ້າຢ່າງສຸດ ຄວາມສາມາດແລະບໍຣິສຸດໃຈສູ່ປະເທດລາວດັ່ງເດີມ
ຂ້າພະເຈົ້າໃນນາມພັກປະຊາຊົນລາວອິສຣະ -ຂໍອຳນວຽພອນແກ່
ພີ່ນ້ອງຊາວລາວທົ່ວທຸກແຫ່ງຫົນ ຕຳບົລເໜືອໃຕ້
ຈົ່ງມີຄວາມສຸກແລະວັທນາຖາວອນຕຣອດຣາຕີເທີ້ນ

ຈາກສູນກາງສັນພູໝອກ ທີ່ນະຄອນວຽງຈັນ

ໃນນາມພັກປະຊາຊົນລາວອິສຣະ -ວັນທີ -25 -5 -00